ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 1315/ທຫລ
ນະຄອນຫຼວງວຽງຈັນ, ວັນທີ 16 ທັນວາ 2024

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງການໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ

- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ການຄົ້ນຄວ້າຂອງກົມຄຸ້ມຄອງທະນາຄານທຸລະກິດ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ ເພື່ອສົ່ງເສີມການນຳໃຊ້ສະກຸນເງິນກີບ ແລະ ສະກຸນເງິນຂອງປະເທດຄູ່ຮ່ວມມື ເຂົ້າໃນການຊຳລະ ລະຫວ່າງປະເທດ ໃຫ້ມີປະສິດທິຜົນ ແນ່ໃສ່ອຳນວຍຄວາມສະດວກໃຫ້ແກ່ການຄ້າ, ການບໍລິການ ແລະ ການລົງທຶນ ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ການຄຸ້ມຄອງການໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ**

ການຄຸ້ມຄອງການໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ (Appointed Cross Currency Dealer=ACCD) ແມ່ນ ການຈັດຕັ້ງປະຕິບັດບັນດາ ຫຼັກການ, ລະບຽບການ ແລະ ມາດຕະການ ໃນການເຄື່ອນໄຫວຂອງທະນາຄານທຸລະກິດ ກ່ຽວກັບການໃຫ້ບໍລິການ ສະກຸນເງິນກີບ ແລະ ສະກຸນເງິນຂອງປະເທດຄູ່ຮ່ວມມື.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທຸລະກຳເງິນຕາຂ້າມສະກຸນ** ໝາຍເຖິງ ການຊຳລະ, ການໂອນ, ການຮັບຝາກ, ການສະໜອງສິນເຊື່ອ ແລະ ການແລກປ່ຽນເງິນຕາ ສະກຸນເງິນກີບ ແລະ ສະກຸນເງິນຂອງປະເທດຄູ່ຮ່ວມມື ຂອງທະນາຄານທຸລະກິດທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໃນການໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ;

2. **ປະເທດຄູ່ຮ່ວມມື** ໝາຍເຖິງ ປະເທດໃດໜຶ່ງ ຫຼື ຫຼາຍປະເທດ ທີ່ທະນາຄານແຫ່ງ ສປປ ລາວ ໄດ້ຮ່ວມມືກັບທະນາຄານກາງຂອງປະເທດດັ່ງກ່າວ ໃນຮູບແບບທະວິພາຄີ ຫຼື ພະຫຸພາຄີ ເພື່ອສົ່ງເສີມການນໍາໃຊ້ສະກຸນເງິນຂອງຕົນ ເຂົ້າໃນການດໍາເນີນທຸລະກໍາເງິນຕາຂ້າມສະກຸນ;

3. **ທະນາຄານທຸລະກິດຂອງປະເທດຄູ່ຮ່ວມມື** ໝາຍເຖິງ ທະນາຄານທຸລະກິດທີ່ໄດ້ຮັບການແຕ່ງຕັ້ງ ຫຼື ອະນຸຍາດ ຈາກທະນາຄານກາງຂອງປະເທດດັ່ງກ່າວ ໃຫ້ດໍາເນີນທຸລະກໍາເງິນຕາຂ້າມສະກຸນ.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ທະນາຄານທຸລະກິດ ແລະ ກົມພາຍໃນທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການໃຫ້ບໍລິການທຸລະກໍາເງິນຕາຂ້າມສະກຸນ.

## ໝວດທີ 2
## ການຂໍອະນຸຍາດໃຫ້ບໍລິການທຸລະກໍາເງິນຕາຂ້າມສະກຸນ

**ມາດຕາ 5 ການຂໍອະນຸຍາດ**

ທະນາຄານທຸລະກິດ ທີ່ມີຈຸດປະສົງໃຫ້ບໍລິການທຸລະກໍາເງິນຕາຂ້າມສະກຸນ ຕ້ອງຂໍອະນຸຍາດໃຫ້ບໍລິການທຸລະກໍາເງິນຕາຂ້າມສະກຸນ ນໍາກົມຄຸ້ມຄອງທະນາຄານທຸລະກິດ.

ເອກະສານປະກອບການຂໍອະນຸຍາດໃຫ້ບໍລິການທຸລະກໍາເງິນຕາຂ້າມສະກຸນ ມີດັ່ງນີ້:

1. ໜັງສືສະເໜີຂໍອະນຸຍາດການໃຫ້ບໍລິການທຸລະກໍາເງິນຕາຂ້າມສະກຸນ;
2. ໜັງສືຢັ້ງຢືນການຮ່ວມມືກັບທະນາຄານທຸລະກິດຂອງປະເທດຄູ່ຮ່ວມມື;
3. ລະບຽບການກ່ຽວກັບການບໍລິການທຸລະກໍາເງິນຕາຂ້າມສະກຸນ;
4. ຄູ່ມືການໃຫ້ບໍລິການທຸລະກໍາເງິນຕາຂ້າມສະກຸນ;
5. ແຜນການໃຫ້ບໍລິການທຸລະກໍາເງິນຕາຂ້າມສະກຸນ ສາມປີ ເປັນຕົ້ນ ການລົງທຶນ, ລາຍຮັບ, ລາຍຈ່າຍ, ປະລິມານທຸລະກໍາ ແລະ ແຫຼ່ງທີ່ມາຂອງທຶນ;
6. ບົດວິພາກເສດຖະກິດ-ເຕັກນິກ (Feasibility Study) ທີ່ຍົກໃຫ້ເຫັນ ການວິເຄາະຄູ່ແຂ່ງ, ການຕະຫຼາດ, ສະພາບແວດລ້ອມພາຍໃນ ແລະ ພາຍນອກ ແລະ ລະບຸແຜນຄາດຄະເນດໍາເນີນທຸລະກິດ;
7. ແຜນວາດກ່ຽວກັບການນໍາໃຊ້ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ລະບົບການຊໍາລະທີ່ນໍາໃຊ້ໃນການໃຫ້ບໍລິການທຸລະກໍາເງິນຕາຂ້າມສະກຸນ.

ທຸກເອກະສານປະກອບການຂໍອະນຸຍາດຂອງທະນາຄານທຸລະກິດ ຕ້ອງເປັນພາສາລາວ. ໃນກໍລະນີເອກະສານສ້າງຂຶ້ນເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ.

**ມາດຕາ 6 ການພິຈາລະນາ**

ພາຍຫຼັງໄດ້ຮັບເອກະສານປະກອບການຂໍອະນຸຍາດໃຫ້ບໍລິການທຸລະກໍາເງິນຕາຂ້າມສະກຸນ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ກົມຄຸ້ມຄອງທະນາຄານທຸລະກິດ ຕ້ອງພິຈາລະນາອອກໃບອະນຸຍາດ ຫຼື ປະຕິເສດການຂໍອະນຸຍາດໃຫ້ບໍລິການທຸລະກໍາເງິນຕາຂ້າມສະກຸນ ຢ່າງເປັນລາຍລັກອັກສອນ ພາຍໃນເວລາ ສາມສິບ ວັນ. ໃນກໍລະນີປະຕິເສດ ຕ້ອງແຈ້ງເຫດຜົນໃຫ້ຜູ້ຂໍອະນຸຍາດຊາບ.

ກົມຄຸ້ມຄອງທະນາຄານທຸລະກິດ ຈະອອກໃບອະນຸຍາດການໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ ຖ້າເຫັນວ່າຜູ້ຂໍອະນຸຍາດ ມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ເປັນທະນາຄານທຸລະກິດ ທີ່ໄດ້ຮັບການເຫັນດີຈາກທະນາຄານແຫ່ງ ສປປ ລາວ ແລະ ທະນາຄານກາງຂອງປະເທດຄູ່ຮ່ວມມື ໃນການໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ;

2. ມີການຮ່ວມມືກັບທະນາຄານທຸລະກິດຂອງປະເທດຄູ່ຮ່ວມມື;

3. ມີແຜນການກ່ຽວກັບການໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ ຊຶ່ງມີເນື້ອໃນຄົບຖ້ວນ ແລະ ສາມາດຈັດຕັ້ງປະຕິບັດໄດ້;

4. ມີລະບົບການຊຳລະທີ່ເຊື່ອມຕໍ່ກັບລະບົບການຊຳລະ ຂອງທະນາຄານທຸລະກິດຂອງປະເທດຄູ່ຮ່ວມມື;

5. ມີກົນໄກການນຳເງິນ ເຂົ້າ-ອອກ ລະຫວ່າງ ສປປ ລາວ ກັບປະເທດຄູ່ຮ່ວມມື;

6. ມີຕາໜ່າງການໃຫ້ບໍລິການໃນເຂດພື້ນທີ່ເປົ້າໝາຍທີ່ຈະສົ່ງເສີມທຸລະກຳເງິນຕາຂ້າມສະກຸນ.

ໃນເວລາພິຈາລະນາການຂໍອະນຸຍາດ ຖ້າເຫັນວ່າມີຄວາມຈຳເປັນ ກົມຄຸ້ມຄອງທະນາຄານທຸລະກິດ ມີສິດທວງເອົາເອກະສານ ແລະ ຂໍ້ມູນເພີ່ມເຕີມ ຈາກຜູ້ຂໍອະນຸຍາດ ຫຼື ເຊີນພາກສ່ວນທີ່ກ່ຽວຂ້ອງມາໃຫ້ຂໍ້ມູນ.

### ມາດຕາ 7 ການນຳໃຊ້ໃບອະນຸຍາດ

ໃບອະນຸຍາດໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ ມີອາຍຸການນຳໃຊ້ ສາມ ປີ ແລະ ສາມາດຕໍ່ອາຍຸການນຳໃຊ້ໄດ້ ຊຶ່ງທະນາຄານທຸລະກິດ ຕ້ອງສະເໜີຕໍ່ກົມຄຸ້ມຄອງທະນາຄານທຸລະກິດ ພິຈາລະນາ ກ່ອນຈະໝົດອາຍຸການນຳໃຊ້ສາມສິບ ວັນ ໂດຍປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂໍ້ 1, 2, 5 ແລະ 6 ຂອງຂໍ້ຕົກລົງສະບັບນີ້.

ທະນາຄານທຸລະກິດ ຕ້ອງນຳໃຊ້ໃບອະນຸຍາດໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ ຖືກຕ້ອງຕາມຂອບເຂດທີ່ກົມຄຸ້ມຄອງທະນາຄານທຸລະກິດ ກຳນົດ ໂດຍບໍ່ສາມາດ ມອບ, ໂອນ ຫຼື ໃຫ້ຜູ້ອື່ນນຳໃຊ້ແທນ.

### ມາດຕາ 8 ຄ່າທຳນຽມການອອກໃບອະນຸຍາດ

ທະນາຄານທຸລະກິດທີ່ໄດ້ຮັບໃບອະນຸຍາດໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ ຕ້ອງຊຳລະຄ່າທຳນຽມ ດັ່ງນີ້:

1. ຄ່າທຳນຽມການອອກໃບອະນຸຍາດໃຫ້ບໍລິການເງິນຕາຂ້າມສະກຸນ ຈຳນວນ ຫ້າລ້ານ ກີບ ໂດຍຊຳລະໃນເວລາໄດ້ຮັບໃບອະນຸຍາດ;

2. ຄ່າທຳນຽມການຕໍ່ອາຍຸໃບອະນຸຍາດໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ ຈຳນວນ ສາມລ້ານ ກີບ ໂດຍຊຳລະໃນເວລາໄດ້ຮັບໃບອະນຸຍາດ.

## ໝວດທີ 3
## ການດຳເນີນທຸລະກຳເງິນຕາຂ້າມສະກຸນ

### ມາດຕາ 9 ຂອບເຂດການດຳເນີນທຸລະກຳເງິນຕາຂ້າມສະກຸນ

ຂອບເຂດການດຳເນີນທຸລະກຳເງິນຕາຂ້າມສະກຸນ ມີດັ່ງນີ້:

1. ໃຫ້ບໍລິການຊຳລະກັບປະເທດຄູ່ຮ່ວມມື;

2. ຮັບຝາກເງິນ;

3. ສະໜອງສິນເຊື່ອ;

4. ແລກປ່ຽນເງິນຕາ;

5. ເປັນຕົວແທນໃຫ້ແກ່ທະນາຄານທຸລະກິດອື່ນ ໃນການນຳເງິນຂອງປະເທດຄູ່ຮ່ວມມື ເຂົ້າ-ອອກ ສປປ ລາວ ກັບປະເທດຄູ່ຮ່ວມມື.

**ມາດຕາ 10 ສິດຂອງທະນາຄານທຸລະກິດທີ່ໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ**

ທະນາຄານທຸລະກິດທີ່ໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ ມີສິດ ດັ່ງນີ້:

1. ເປີດບັນຊີເງິນຝາກເປັນສະກຸນເງິນກີບ ແລະ ສະກຸນເງິນຂອງປະເທດຄູ່ຮ່ວມມື ຢູ່ທະນາຄານທຸລະກິດຂອງປະເທດຄູ່ຮ່ວມມື;

2. ຊື້ ຂາຍ ສະກຸນເງິນກີບ ແລະ ສະກຸນເງິນຂອງປະເທດຄູ່ຮ່ວມມື ກັບທະນາຄານທຸລະກິດຢູ່ປະເທດຄູ່ຮ່ວມມື ຕາມການກຳນົດຂອງກົມຄຸ້ມຄອງເງິນຕາຕ່າງປະເທດ;

3. ດຳເນີນທຸລະກຳ ສະກຸນເງິນກີບ ແລະ ສະກຸນເງິນຂອງປະເທດຄູ່ຮ່ວມມື ຢູ່ຕະຫຼາດລະຫວ່າງທະນາຄານ ຂອງປະເທດຄູ່ຮ່ວມມື;

4. ນຳສະກຸນເງິນກີບ ແລະ ສະກຸນເງິນຂອງປະເທດຄູ່ຮ່ວມມື ໃນຮູບແບບເງິນໂອນ ແລະ ເງິນສົດ ເຂົ້າ-ອອກ ສປປ ລາວ ຕາມການກຳນົດຂອງກົມຄຸ້ມຄອງເງິນຕາຕ່າງປະເທດ;

5. ແຕ່ງຕັ້ງທະນາຄານທຸລະກິດອື່ນ ເປັນຕົວແທນ (Agency Banking) ເພື່ອໃຫ້ບໍລິການຊຳລະສະກຸນເງິນຂອງປະເທດຄູ່ຮ່ວມມື ຕາມຂອບເຂດທີ່ຕົນກຳນົດ;

6. ຮັກສາລະດັບຖານະເງິນຕາຕ່າງປະເທດທີ່ເປັນສະກຸນເງິນຂອງປະເທດຄູ່ຮ່ວມມື ຕາມການພິຈາລະນາຂອງກົມຄຸ້ມຄອງທະນາຄານທຸລະກິດ ເປັນແຕ່ລະກໍລະນີ;

7. ໄດ້ຮັບການເພີ່ມສະພາບຄ່ອງ ຈາກທະນາຄານແຫ່ງ ສປປ ລາວ ຕາມຄວາມຈຳເປັນຕົວຈິງ;

8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 11 ໜ້າທີ່ຂອງທະນາຄານທຸລະກິດທີ່ໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ**

ທະນາຄານທຸລະກິດທີ່ໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ ມີໜ້າທີ່ ດັ່ງນີ້:

1. ໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ ຕາມຂອບເຂດທີ່ໄດ້ຮັບອະນຸຍາດ;

2. ດຳເນີນການໄລ່ລຽງ ແລະ ຫັກບັນຊີທຸ ລະກຳເງິນຕາຂ້າມສະກຸນ;

3. ປະເມີນຄວາມຕ້ອງການ ແລະ ການສະໜອງ ສະກຸນເງິນກີບ ແລະ ສະກຸນເງິນຂອງປະເທດຄູ່ຮ່ວມມື;

4. ບໍລິຫານສະພາບຄ່ອງ ແລະ ຮັບປະກັນຄວາມພຽງພໍຂອງ ສະກຸນເງິນກີບ ແລະ ສະກຸນເງິນຂອງປະເທດຄູ່ຮ່ວມມື;

5. ຊຸກຍູ້ລູກຄ້າຂອງຕົນ ນຳໃຊ້ສະກຸນເງິນກີບ ແລະ ສະກຸນເງິນຂອງປະເທດຄູ່ຮ່ວມມື ເຂົ້າໃນການຊຳລະກັບປະເທດຄູ່ຮ່ວມມື;

6. ຕິດຕາມ ກວດກາ ທະນາຄານທຸລະກິດອື່ນ ທີ່ເປັນຕົວແທນ ໃນການໃຫ້ບໍລິການຊຳລະເປັນສະກຸນເງິນຂອງປະເທດຄູ່ຮ່ວມມື;

7. ລາຍງານກ່ຽວກັບການເຄື່ອນໄຫວໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນຂອງຕົນ ໃຫ້ທະນາຄານແຫ່ງ ສປປ ລາວ ຕາມລະບຽບການທີ່ກ່ຽວຂ້ອງ;

8. ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ສິດ ແລະ ໜ້າທີ່ ຂອງພາກສ່ວນທີ່ກ່ຽວຂ້ອງ

**ມາດຕາ 12 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງທະນາຄານທຸລະກິດ**

ກົມຄຸ້ມຄອງທະນາຄານທຸລະກິດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ ແລະ ນິຕິກຳ ກ່ຽວກັບການໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ ເພື່ອສະເໜີຄະນະຜູ້ວ່າການພິຈາລະນາ ພ້ອມທັງຈັດຕັ້ງຜັນຂະຫຍາຍ ແລະ ເຜີຍແຜ່ນະໂຍບາຍ ແລະ ນິຕິກຳດັ່ງກ່າວ ຢ່າງມີປະສິດທິຜົນ;
2. ຄົ້ນຄວ້າ ອະນຸຍາດ, ຕໍ່, ໂຈະຊົ່ວຄາວ ແລະ ຍົກເລີກ ການໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ;
3. ເກັບກຳ, ສັງລວມ, ວິເຄາະ ແລະ ລາຍງານ ການໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ ໃຫ້ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິ;
4. ຕິດຕາມ ກວດກາ ທະນາຄານທຸລະກິດທີ່ໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ;
5. ກຳນົດໃຫ້ທະນາຄານທຸລະກິດທີ່ໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ ເພື່ອພັດທະນາ ແລະ ແກ້ໄຂບັນຫາກ່ຽວກັບການດຳເນີນທຸລະກຳເງິນຕາຂ້າມສະກຸນ;
6. ປະຕິບັດມາດຕະການຕໍ່ທະນາຄານທຸລະກິດທີ່ລະເມີດຂໍ້ຕົກລົງສະບັບນີ້;
7. ປະສານສົມທົບກັບກົມຄຸ້ມຄອງເງິນຕາຕ່າງປະເທດ, ກົມຄຸ້ມຄອງລະບົບການຊຳລະ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງວຽກງານການໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 13 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງເງິນຕາຕ່າງປະເທດ**

ກົມຄຸ້ມຄອງເງິນຕາຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ ແລະ ນິຕິກຳ ກ່ຽວກັບການບໍລິການເງິນຕາຕ່າງປະເທດ ແລະ ການນຳເງິນເຂົ້າ-ອອກ ລະຫວ່າງ ສປປ ລາວ ຂອງທະນາຄານທຸລະກິດທີ່ໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ ກັບປະເທດຄູ່ຮ່ວມມື ເພື່ອສະເໜີຄະນະຜູ້ວ່າການພິຈາລະນາ ພ້ອມທັງຈັດຕັ້ງຜັນຂະຫຍາຍ ແລະ ເຜີຍແຜ່ນະໂຍບາຍ ແລະ ນິຕິກຳດັ່ງກ່າວ ຢ່າງມີປະສິດທິຜົນ;
2. ເກັບກຳ, ສັງລວມ, ວິເຄາະ ແລະ ລາຍງານ ການບໍລິການເງິນຕາຕ່າງປະເທດ ແລະ ການນຳເງິນເຂົ້າ-ອອກ ລະຫວ່າງ ສປປ ລາວ ຂອງທະນາຄານທຸລະກິດທີ່ໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ ກັບປະເທດຄູ່ຮ່ວມມື ໃຫ້ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິ;
3. ຊຸກຍູ້, ສົ່ງເສີມການນຳໃຊ້ສະກຸນເງິນ ເຂົ້າໃນການຊຳລະກັບປະເທດຄູ່ຮ່ວມມື ໂດຍຜ່ານທະນາຄານທຸລະກິດທີ່ໃຫ້ບໍລິການທຸລະກຳເງິນຕາຂ້າມສະກຸນ;

4. ປະສານສົມທົບກັບກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງລະບົບການຊໍາລະ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງວຽກງານການໃຫ້ບໍລິການທຸລະກໍາເງິນຕາຂ້າມສະກຸນ;

5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 14 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງລະບົບການຊໍາລະ**

ກົມຄຸ້ມຄອງລະບົບການຊໍາລະ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ ແລະ ນິຕິກໍາ ທີ່ຕິດພັນກັບລະບົບການຊໍາລະ ເພື່ອຮອງຮັບທຸລະກໍາເງິນຕາຂ້າມສະກຸນເພື່ອສະເໜີຄະນະຜູ້ວ່າການພິຈາລະນາ ພ້ອມທັງຈັດຕັ້ງຜັນຂະຫຍາຍ ແລະ ເຜີຍແຜ່ນະໂຍບາຍ ແລະ ນິຕິກໍາດັ່ງກ່າວ ຢ່າງມີປະສິດທິຜົນ;

2. ຕິດຕາມ ກວດກາ ລະບົບການຊໍາລະລະຫວ່າງປະເທດ ກ່ຽວກັບທຸລະກໍາເງິນຕາຂ້າມສະກຸນ;

3. ເກັບກໍາ, ສັງລວມ, ວິເຄາະ ແລະ ລາຍງານ ທີ່ຕິດພັນກັບລະບົບການຊໍາລະ ເພື່ອຮອງຮັບທຸລະກໍາເງິນຕາຂ້າມສະກຸນ ໃຫ້ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິ;

4. ປະສານສົມທົບກັບກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງເງິນຕາຕ່າງປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງວຽກງານການໃຫ້ບໍລິການທຸລະກໍາເງິນຕາຂ້າມສະກຸນ;

5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດ 5
## ບົດບັນຍັດສຸດທ້າຍ

**ມາດຕາ 15 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງທະນາຄານທຸລະກິດ ເປັນເຈົ້າການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ກົມຄຸ້ມຄອງເງິນຕາຕ່າງປະເທດ, ກົມຄຸ້ມຄອງລະບົບການຊໍາລະ, ທະນາຄານທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 16 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຮັກສາການຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ
ຜູ້ວ່າການ

**ວັດທະນາ ດາລາລອຍ**